**ມິຊຊາອາທິດທີ 19 ກຳນົດທຳມະດາປີ C**

**ວັນທີ 11 ສິງຫາ 2019**



**ພຣະວໍລະສານໂດຍນັກບຸນລູກາ 12, 35-40**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວກັບພວກລູກສິດວ່າ: ຈົ່ງມັດແອວໃຫ້ແໜ້ນແລະຖືຕະກຽງໄຕ້ຮຸ່ງຢູ່. ພວກເຈົ້າເປັນດັ່ງຄົນໃຊ້ທີ່ຄອງຖ້ານາຍຫລົບມາຈາກງານວິວາຫະມຸງຄຸນ ເພື່ອໄຂຮັບເມື່ອນາຍມາຮອດແລະເຄາະປະຕູ. ບຸນມະຫາລາບແກ່ພວກຄົນໃຊ້ທີ່ນາຍເຫັນເຝົ້າຄອຍຢູ່ເມື່ອເວລານາຍຫລົບມາ. ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ນາຍຈະມັດແອວເພິ່ນເອງ, ຈະບອກພວກຄົນໃຊ້ເຂົ້ານັ່ງໂຕະແລ້ວຍ່າງໄປຮັບໃຊ້ພວກເຂົາ. ບຸນມະຫາລາບແກ່ພວກຄົນໃຊ້ທີ່ນາຍຈະເຫັນເຝົ້າຄອຍຢູ່ເມື່ອເວລານາຍຫລົບມາຈະເປັນເວລາເດິກດາຍທ້າຍຄືນແລ້ວກໍຕາມ. ພວກເຈົ້າຈົ່ງຮູ້ໄວ້ເຖີດວ່າ, ຖ້າເຈົ້າເຮືອນຮູ້ຈັກວ່າເວລາໃດຜູ້ຮ້າຍຈະມາ, ເຂົາຄົງຈະເຝົ້າຮັກສາບໍ່ໃຫ້ຜູ້ຮ້າຍເຈາະເຮືອນເຂົາໄດ້. ພວກເຈົ້າກໍດັ່ງດຽວກັນ, ຈົ່ງຕຽມພ້ອມສະເໝີ, ຍ້ອນວ່າບຸດມະນຸດຈະສະເດັດມາໃນເວລາພວກເຈົ້າບໍ່ນຶກບໍ່ຝັນນັ້ນແລ້ວ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 12, 35-40**

ວາຈາຂອງພຣະເຈົ້າຊຶ່ງພວກເຮົາໄດ້ຟັງວັນນີ້ຢູ່ໃນບໍລິບົດຂອງຄໍາເທດສອນກ່ຽວກັບອານາຈັກສະຫວັນ. ຈົ່ງຊອກຫາອານາຈັກຂອງພຣະເຈົ້າກ່ອນ ແລ້ວສິ່ງອື່ນນັ້ນພຣະອົງຈະປະທານໃຫ້ເຈົ້າຕື່ມອີກ.

ວັນນີ້ພຣະເຢຊູເຈົ້າບອກສອນພວກເຮົາໃຫ້ຮູ້ຈັກຕື່ນເຝົ້າເໝືອນດັ່ງຄົນໃຊ້ທີ່ມັດແອວແລະຖືຕະກຽງໄຕ້ຮຸ່ງຢູ່. ໝາຍວ່າຈົ່ງຕື່ນເຝົ້າແລະຕຽມພ້ອມຢູ່ສະເໝີ. ຕື່ນເຝົ້າເພື່ອຫຍັງ? ເພື່ອລໍຖ້ານາຍກັບມາຈາກງານດອງ. ຄໍາຖາມທີ່ຕາມມາກໍຄື ອານາຈັກສະຫວັນແລະນາຍທີ່ກັບມາຈາກງານດອງນີ້ມີຄວາມກ່ຽວພັນກັນຢ່າງໃດ? ການຕື່ນເຝົ້າແລະການຊອກສະແຫວງຫາອານາຈັກຂອງພຣະເຈົ້າເປັນສິ່ງດຽວກັນບໍ? ລາງວັນທີ່ໄດ້ຮັບຂອງຄົນໃຊ້ທີ່ຕື່ນເຝົ້າເພື່ອຮັບນາຍແມ່ນຫຍັງ? ພວກເຮົາຈະພ້ອມກັນຊອກຫາຄໍາຕອບຂອງຄໍາຖາມເຫລົ່ານີ້ໃນວາຈາພຣະເຈົ້າວັນນີ້.

ຖ້າຄົນໃຊ້ຮູ້ຈັກເວລາທີ່ນາຍຈະກັບມາເຂົາກໍບໍ່ຈໍາເປັນຕ້ອງຕື່ນເຝົ້າ. ແລະຖ້ານາຍຮູ້ຈັກເວລາໃດງານລ້ຽງຈະສິ້ນສຸດລົງ, ຄົນໃຊ້ກໍບໍ່ຕ້ອງລໍຖ້າເພາະນາຍໄດ້ບອກເຂົາລ່ວງໜ້າແລ້ວ. ແຕ່ຍ້ອນຄົນໃຊ້ບໍ່ຮູ້ຈັກເວລາແລະນາຍເອງກໍບໍ່ຮູ້ຈັກເຊັ່ນດຽວກັນ, ດັ່ງນັ້ນສິ່ງທີ່ຄົນໃຊ້ຕ້ອງກະທໍາຄືການຕື່ນເຝົ້າ. ແຕ່ຕ້ອງຕື່ນເຝົ້າຢ່າງໃດ? ການຕື່ນເຝົ້າບໍ່ໝາຍວ່າບໍ່ທໍາໜ້າທີ່ວຽກງານຂອງຕົນທີ່ໄດ້ຮັບມອບໝາຍຈາກເຈົ້ານາຍ. ການຕື່ນເຝົ້າບໍ່ໝາຍວ່າຕ້ອງຢູ່ໃນຄວາມກັງວົນແລະຢ້ານກົວ. ແຕ່ການຕື່ນເຝົ້າຄືການຕຽມພ້ອມທີ່ຈະພົບນາຍ. ຖ້າພວກເຮົາທໍາໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍບໍ່ສໍາເລັດ, ພວກເຮົາກໍບໍ່ພ້ອມທີ່ຈະພົບນາຍ. ຖ້າພວກເຮົາມົວເມົາແຕ່ນໍາການກິນການດື່ມແລະມ່ວນຊື່ນລື່ນເລີງ, ແນ່ນອນພວກເຮົາກໍບໍ່ພ້ອມທີ່ຈະພົບນາຍ. ຖ້າພວກເຮົາຄິດວ່າຍັງອີກດົນນາຍຈຶ່ງຈະກັບມາ, ພວກເຮົາກໍບໍ່ລໍຖ້ານາຍ. ເພາະສະນັ້ນ, ການຕື່ນເຝົ້າຄືການປະຕິບັດສິ່ງທີ່ນາຍໄດ້ສັ່ງໄວ້ໃຫ້ສໍາເລັດໃນແຕ່ລະຍາມ, ແຕ່ລະວັນ; ເພາະນາຍຈະກັບມາໃນເວລາທີ່ພວກເຮົາບໍ່ຮູ້ຈັກ.

ເມື່ອນາຍກັບມາແລ້ວ, ແທນທີ່ຄົນໃຊ້ຈະຮັບໃຊ້ນາຍຂອງຕົນ, ຜູ້ເປັນນາຍພັດມັດແອວເພື່ອບົວລະບັດຄົນໃຊ້ຂອງຕົນ. ໝາຍວ່າ, ລາງວັນທີ່ຄົນໃຊ້ສັດຊື່ແລະຕື່ນເຝົ້ານີ້ຄືການໄດ້ເປັນມິດສະຫາຍກັບນາຍ. ດັ່ງນັ້ນ, ເຂົາຈຶ່ງມີສິດນັ່ງຮ່ວມໂຕະກັບນາຍຂອງຕົນແລະນາຍຂອງເຂົາຈະຮັບໃຊ້ເຂົາເໝືອນກັບມິດສະຫາຍ. ແນ່ນອນ, ສິ່ງທີ່ຄົນໃຊ້ຍິນດີທີ່ສຸດຄືການໄດ້ເປັນມິດສະຫາຍແລະຢູ່ກັບນາຍຂອງຕົນຕະຫລອດໄປ. ສິ່ງນີ້ເປັນຄວາມປຽບທຽບທີ່ສອນພວກເຮົາວ່າ ຖ້າພວກເຮົານໍາເອົາວາຈາຂອງພຣະເຈົ້າມາປະຕິບັດໃຫ້ເກີດຜົນໃນຊີວິດຂອງຕົນແຕ່ລະຍາມແຕ່ລະວັນ, ໝາກຜົນທີ່ພວກເຮົາໄດ້ຮັບຄືການເປັນມິດສະຫາຍກັບພຣະເຈົ້າແລະນັ່ງຮ່ວມໂຕະກັບພຣະອົງອັນແມ່ນອານາຈັກສະຫວັນນັ້ນແລ. ຍ້ອນສິ່ງນີ້ບໍ່ແມ່ນເລື່ອງງ່າຍໃນການປະຕິບັດ, ແຕ່ຖ້າຜູ້ໃດປະຕິບັດໄດ້ ຜູ້ນັ້ນມີບຸນຫລາຍ. ດັ່ງນັ້ນ, ພຣະເຢຊູເຈົ້າຈຶ່ງກ່າວວ່າ: « ບຸນມະຫາລາບແກ່ພວກຄົນໃຊ້ທີ່ນາຍເຫັນເຝົ້າຄອຍຢູ່ເມື່ອເວລານາຍຫລົບມາ ». ຂໍໃຫ້ພວກເຮົາແຕ່ລະຄົນໄດ້ຮັບບຸນມະຫາລາບນີ້ທຸກຄັ້ງທີ່ພວກເຮົາປະຕິບັດຕາມວາຈາຂອງພຣະເຈົ້ານັ້ນເທີ້ນ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ